# Saisungkhom Newsletter

## P.O. Box. 330513

West Hartford, CT 06133-0513, Tel. (860) 523-8340, Email: laoact@comcast.net

### ສະບາຍດີທ່ານຜູ້ອ່ານທີ່ນັບຖື ແລະຮັກແພງ:

ສາຍສັງຄົມນີ້ແມ່ນຂ່າວສານຂອງສະມາຄົມລາວ ຣັຖຄອນເນກຕິເຄດ.ສາຍສັງຄົມຈະພະຍາຍາມຮັບໃຊ້ນຳສົ່ງຂ່າວສານຕ່າງໆໃຫ້ພີ່ນ້ອງຊາວລາວ ໄດ້ຮູ້ຈັກເຫດການ, ການເຄື່ອນໄຫວອັນສຳຄັນທີ່ເກີດຂື້ນໃນສັງຄົມລາວ, ເຊັ່ນ ການສຶກສາ, ການຮັກສາສຸຂພາບ, ສົ່ງເສີມພາສາ ແລະວັທນະທັມລາວ, ເສຖກິດແລະສັງຄົມຕ່າງໆ ເພື່ອສົ່ງເສີມຊີວິດການເປັນຢູ່ຂອງຊາວລາວໃຫ້ດີຂື້ນ. ຖ້າທ່ານມີຈຸດປະສົງ ຢາກຈະສົ່ງເສີມຂ່າວສານນີ້ໃຫ້ ຄົງໂຕສືບຕໍ່ໄປໄດ້ ຂໍເຊີນທ່ານໃຫ້ການຊ່ວຍເຫຼືອຕາມຄວາມສາມາດ, ເຊັ່ນການເຂົ້າມາເປັນສະມາຊິກຂອງສະມາຄົມ ການຕິຊົມ ເພື່ອກໍ່ສ້າງໃຫ້ສະມາຄົມມີຄວາມກ້າວໜ້າ ແລະໃຫ້ກຳລັງໃຈແກ່ຄນະອາສາສະມັກ ທີ່ໄດ້ສະລະເວລາພະຍາຍາມສ້າງສະມາຄົມນີ້ຄົງໂຕຢູ່ໄປໄດ້.

***Dear Readers**: The Sungkom is pleased to bring you news about the activities of the Lao-American community in Connecticu, such as Lao culture events, education, employment opportunity and other related issues that effect the quality of life of the Lao-American. If you have any news or announcements that you would like to make through our newsletter, please feel free to send your information to laoact@comcast.net. Attention: Sai Sungkom Newsletter. In order for us to maintain this newsletter for future editions, your input are needed. Your input, such as ideas, positive story on how to promote education for our children, economic opportunities for unemployed people, equal access to services and other information that you know will benefit the Lao-American community.*



*Four Points Sheraton Hotel, 275 Research Parkway, Merident, CT. 06450. Experience the Lao-American Cultural Events,Health Promotion, Dinner, Live Band, Classical dance, Folk dance & many more. Please join us to see and feel the difference. Reserve your ticket before April 18, 2009 Donation: $45.00 If you wish to stay overnight don't forget to ask for discount from the hotel*

### ຄຳຖາມ ແລະຄຳຕອບໂດຍຫຍໍ້ກ່ຽວກັບຈຸດປະສົງຂອງສະມາຄົມ

ຖາມ: ສະມາຄົມລາວແຫ່ງຣັດຄອນເນກຕິເຄດແມ່ນຫຍັງ?

ຕອບ: ສະມາຄົມລາວແຫ່ງຣັດຄອນເນກຕິເຄດແມ່ນຂອງຄົນລາວໝົດທຸກຄົນ ແມ່ນການຈັດຕັ້ງຂອງຊາວລາວ ຕັ້ງຂື້ນມາທີ່ໄດ້ຂື້ນທະບຽນຢ່າງຖືກຕ້ອງຕາມກົດໝາຍ ເປັນອົງການທີ່ບໍ່ຫາຜົລກຳໄລລາຍໄດ້ເປັນການສ່ວນຕົວ ພາຍໃຕ້ກົດໝາຍຂອງຣັຖຄອນເນກຕິເຄດ, ຣັຖບານກາງ ແລະບໍ່ຮັບໃຊ້ຜົນປະໂຍດຂອງກຸ່ມການເມືອງໃດໆ

ຖາມ: ສະມາຄົມຕັ້ງຂື້ນມາປີໃດແລະມີຈຸດປະສົງຫຍັງແດ່?

ຕອບ: ສະມາຄົມຕັ້ງຂື້ນມາປີ ໑໙໙໐ ເພື່ອທ້ອນໂຮມຄົນລາວ, ຊ່ວຍເຫຼືອສົ່ງເສີມວິດການເປັນຢູ່ຂອງພີ່ນ້ອງຊາວລາວ, ປ້ອງກັນຮັກສາວັທນະທັມ, ພາສາແລະສິລປະກັມຕ່າງໆໄວ້ໃຫ້ເຍົາວະຊົນຊາວລາວ ສືບຕໍ່ໄປໃນອະນາ ຄົດໃຫ້ຄວາມ ຮ່ວມໄມ້ຮ່ວມມືກັບອົງການຈັດຕັ້ງຕ່າງໆ ທີ່ມີເປົ້າໝາຍ ຄ້າຍຄືກັນແລະເພື່ອສອນພາສາ, ສິລປະກັມ ແລະ ວັທະນະທັມໃຫ້ ແກ່ເຍົາວະຊົນແລະຜູ້ທີ່ສົນໃຈກ່ຽວກັບວັທະນະທັມຂອງລາວ.

ຖາມ: ຄະນະສະພາອຳນວຍການ ແລະຄະນະບໍຣິຫານຂອງສະມາຄົມໄດ້ຮັບຄ່າຕອບແທນບໍ່?

ຕອບ: ບໍ່ ຄະນະສະພາ ແລະຄະນະບໍຣິຫານຂອງສະມາຄົມທັງໝົດແມ່ນອາສາສະມັກ ຜູ້ທີ່ມີນໍ້າໃຈສູງສົ່ງ.

ຖາມ: ຄະນະສະພາອຳນວຍການ ແລະຄະນະບໍຣິຫານຂອງສະມາຄົມມີອາຍຸປີການຈັກປີ?

ຕອບ: ຄະນະສະພາ ແລະຄະນະບໍຣິຫານຂອງສະມາຄົມມີອາຍຸປີການສີ່ປີແລະຜູ້ນຶ່ງຮັບໃຊ້ບໍ່ເກີນສອງສະໄໝ

ຖາມ: ປັດຈຸບັນນີ້ສະມາຄົມເຮັດຫຍັງແດ່?

ຕອບ: ສະມາຄົມປະຕິບັດຕາມເປົ້າໝາຍຂໍ້ສອງຂ້າງບົນ ຕາມຄວາມຮູ້ຄວາມສາມາດຂອງຄະນະອາສາສະມັກ ຄືໃຫ້ການສຶກສາອົບລົມ ສັ່ງສອນຊາວນຸ່ມ, ໃຫ້ການຊີ້ນຳແກ່ຄະນະບໍຣິຫານກ່ຽວກັບການຮັກ ສາປ້ອງກັນສຸຂພາບ ສອນພາສາວັທນະທັມ ຈັດງານສລອງປີໃຫ່ມລາວ ເພື່ອຮັກສາຮີດຄອງປະເພນີ ປະຊາສັມພັນກັບອົງການອື່ນໆ ປະກອບສ່ວນນຳພາການສ້າງສິນກິນທານ ຮັກສາຮີດຄອງປະເພນີ ໃຫ້ຄຳແນະນຳເພື່ອສົ່ງ ເສີມຊີວິດໃຫ້ດີຂື້ນ ທອ້ນໂຮມຄົນລາວ ແລະສົ່ງເສີມໃຫ້ມີຄວາມຖືກຕ້ອງປອງດອງກັນ ແລະໃຫ້ການຊ່ວຍເຫຼືອອື່ນໆເວລາຕ້ອງການ.

ຖາມ: ຖ້າຂ້ອຍເປັນສະມາຊິກຂອ້ຍຂອງສະມາຄົມລາວ ຂ້ອຍຈະໄດ້ຜົນປະໂຍດຫຍັງແດ່?

ຕອບ: ເມື່ອທ່ານເປັນສະມາຊິກແລ້ວ ມີຜົນປະໂຍດຫລາຍຢ່າງທີ່ທ່ານຈະໄດ້ຮັບເຊັ່ນ: ມີຄວາມພູມໃຈທີ່ໄດ້ເປັນ ຄົນລາວ ທີ່ມີການ

ຈັດຕັ້ງເປັນຂອງລາວເອງ. ມີຈິດສຳນຶກໃນຄວາມເປັນລາວ ມີຜູ້ທີ່ເຂົ້າໃຈ ແລະມີຈິດສຳນຶກເຂົ້າ ໃຈພາສາ ສິລປະກັມເຫມືອນກັບເຮົາເອງ ແລະສຳຄັນທີ່ສຸດກໍ່ຄືເຮົາເອງ ພໍ່ແມ່ຂອງເຮົາ ຫຼືບັນພະບຸຣຸດຂອງເຮົາກໍມາຈາກລາວຄືກັນ. ທ່ານຈະມີຄວາມພູມໃຈທີ່ໄດ້ຊ່ວຍປ້ອງກັນສັກສາ ວັທນະທັມອັນດີງາມ, ພາສາ ແລະສິລປະກັມລາວໄວ້ຫ້ລູກຫລານ ສືບຕໍ່ໄປ. ທ່ານຈະໄດ້ຮັບຄວາມຊ່ວຍເຫລືອຈາກການຈັດຕັ້ງ, ຫມູ່ເພື່ອນ ເມື່ອເວລາທີ່ຕ້ອງການ. ຖ້າທ່ານຫາກໄດ້ຮັບຄວາມບໍ່ຍຸຕິທັມຈາກບຸກຄົນອື່ນ ຫຼືເຈົ້າຫນ້າທີ່ອື່ນໆ ທາງສະມາຄົມຈະຊ່ວຍເປັນປາກກະບອກສຽງ ຕໍ່ສູ້ເພື່ອຄວາມຍຸຕິທັມໃຫ້ແກ່ທ່ານ. ທ່ານຈະບໍ່ຢູ່ໂດດດ່ຽວ. ພວກເຮົາຈະຢູ່ໃກ້ສິດ ແລະໃຫ້ຄວາມຊ່ວຍເຫລືອຮ່ວມມືແກ່ທ່ານ.

ຖາມ: ສະມາຄົມຕອ້ງການຄວາມຊ່ວຍເຫຼືອມີຫຍັງແດ່?

ຕອບ: ສະມາຄົມຕ້ອງການໃຫ້ພີ່ນ້ອງຊາວລາວທຸກໆຄົນເຂົ້າມາເປັນສະມາຊິກ, ມາປະກອບສ່ວນໃຫ້ຄຳແນະນຳແກ່ ສະມາຄົມ ໃຫ້ມີຄວາມກ້າວຫນ້າ ເປັນກະບອກສຽງໃຫ້ສະມາຄົມ ເພື່ອໃຫ້ພີ່ນ້ອງເຮົາມີຄວາມເຂົ້າໃຈເປັນນ້ຳນຶ່ງ ໃຈດຽວກັນ ຮັກແພງຊຶ່ງກັນ ແລະກັນ ແລະສ້າງສາສັງຄົມຂອງພວກເຮົາໃຫ້ກ້າວຫນ້າທຽບເທົ່າກັບສັງຄົມອື່ນໆ.

*ຕົ້ນໄມ້ທີ່ບໍ່ມີຮາກ ມັນຈະລົ້ມງ່າຍ - ຄົນເຮົາ ຖ້າຂາດວັທນະທັມ ຈະທຳຄວາມຜິດໄດ້ງ່າຍ*

### *A brief questions and answers of the L.A.C.*

*Q. What is the Lao Association of Connecticut, Inc.*

*A. Lao Association of Connecticut, Inc. is an organization belongs to all Laotians. It's a non-profit organization and shall never be used for individual gain or used for favorable group of political party. Registered in the State of Connecticut as a 501c3 status of IRS codes and have a federal Employee Identification Number (EIN).*

*Q. When the organization established and what is the purpose?*

*A. The organization established in 1980 to unify all Laotians, to support each other in time of need, to protect and preserve the Lao culture, language, art for next generations to come, to build network with other organizations who have similar or same objectives and to teach Lao language, art and culture to young generation and interest persons.*

*Q. Are the Board Directors/Members get pay for their time to serve the LAC?*

*A. No. They are all volunteers and proud to serve their community.*

*Q. How long each Board Director/Member serves and for how many terms?*

*A. Each Board Director/Member can serve a four years term, not more than two terms.*

*Q. What the Lao Association is doing?*

*A. The Lao Association follows the answer number two above to the best of their ability, such as unite Laotians, promote and preserve culture, reinforce bonding among Laotians, families and friends by organizing the Lao New Year party, teaching the Lao language for the young generation and other interest persons, help each other in time of need and overall to improve the quality of life of the Laotian American.*

*Q. If I become a member of the LAC what do I get?*

*A. There are many benefits you will be getting, such as you are proud to be Laotian and have the organization that you can call my organization. You have a sense of belonging as a group who can understand and feel like you; and have the same culture, language, art and the most important is you, your parents or your ancestry come from Laos. You will be proud to help protect and preserve your own culture, language and art for your children. You can help your own people as a group in the time of need. If you are being treated unfairly by other persons or the authorities, the LAC can help to fight for you/with you to get justice. You will get support in time of need and many more benefits. You are not alone. We are here with you and for you*

*Q. What kind of support the Lao Association needs?*

*A. First of all, the Lao Association needs you to become a member. You can be part of the team to improve the LAC by participating in Board member, give advice, be committee/sub-committee member, advocacy to promote mutual understanding, participating in LAC activities, represent the LAC when the time of need, help to build network with other organizations and other needs to help the LAC achieve its goal and objectives.*

*"A tree without root is easily to fall. A person without culture identity is easily to fail."*



## *ຄວາມຮູ້ກ່ຽວກັບໂຣຄເບົາຫວານ*

ມີເຫດຜົນສອງຢ່າງ ທີ່ຂ້ອຍຕ້ອງຊອກຫາເວລາປ້ອງກັນໂຣຄເບົາຫວານ ເພື່ອອະນາຄົດຂອງຂ້ອຍເອງ ແລະລູກຫລານ. ໃຫ້ເລີ້ມຕົ້ນເປັນຂັ້ນເທື່ອລະນ້ອຍແຕ່ດຽວນີ້ໄປເພື່ອປ້ອງກັນໂຣຄເບົາຫວານໃຫ້ຊອກຫາວ່າທ່ານມີຄວາມສ່ຽງສູງຕໍ່ການເປັນໂຣຄເບົາຫວານຫລາຍ ປານໃດຊາວ ເອເຊັຍ-ອາເມຣິກັນ ແລະຊາວເອຊັຍປາຊີຟິກ ຜູ້ທີ່ມີຄວາມອ້ວນເກີນຄວນມີຄວາມສ່ຽງສູງຕໍ່ການເປັນໂຣຄເບົາຫວານປະເພດ 2 ຫລືມີໂອກາດຈະເປັນໂຣຄ ເບົາຫວານໄວ-ນັ້ນຫມາຍຄວາມວ່າ ບຸກຄົນດັ່ງກ່າວມີຣະດັບເຊື້ອນ້ຳຕານຢູ່ໃນ ເລືອດສູງຜິດປົກກະຕິ, ແຕ່ກໍ່ບໍ່ສູງພໍທີ່ຈະຮ້ອງວ່າໂຣຄເບົາຫວານໄດ້ເທື່ອ. ໃຫ້ໂອ້ລົມກັບທ່ານຫມໍຂອງທ່ານກ່ຽວກັບອາການສ່ຽງດັ່ງກ່າວ. ເພື່ອລາຍຣະອຽດ ເພີ້ມຕື່ມໃຫ້ໃຊ້ລາຍການຂອງຕາຕະລາງ ທົດສອບຢູ່ ໃນຫນ້າຕໍ່ໄປ. ໃຫ້ລຸດຜ່ອນ ນ້ຳນັກລົງເຫຼັກນ້ອຍ. ນ້ຳນັກທີ່ທ່ານຄິດວ່າປົກກະຕິ ອາດຈະບໍ່ສົມບູນ. ໃຫ້ເບິ່ງຕາຕະ

ລາງນ້ຳນັກຢູ່ອີກຫນ້ານຶ່ງກ່ຽວກັບການສ່ຽງເປັນໂຣຄເບົາ ຫວານຂອງທ່ານ. ທ່ານອາດປ້ອງກັນ ຫຼືເຮັດໃຫ້ອາ ການເປັນໂຣຄເບົາຫວານ ປະເພດ 2 ຂອງທ່ານຊ້າລົງ ຖ້າທ່ານຫາກລົດນ້ຳນັກໄດ້ຢ່າງນ້ອຍ 10 ປອນ. ເຮັດໃຫ້ຮ່າງກາຍມີການເຄື່ອນໄຫວຫລາຍຂຶ້ນອີກໃຫ້ເລືອກການຫັດແຮງ ທີ່ທ່ານມັກ. ໃຫ້ຊັກຊວນສະມາຊິກຄອບຄົວ ແລະຫມູ່ເພື່ອນ ໄປຫັດແຮງນຳກັນ. ໃຫ້ຍ່າງ, ລອຍນ້ຳ, ຂີ່ຣົດຖີບ, ເຕັ້ນລຳ ຫຼືຫຼິ້ນຫມາກບານນຳກັນ. ໃຫ້ຫັດ ແຮງຢ່າງນ້ອຍມື້ນຶ່ງ 30 ນາທີ, 5 ວັນຕໍ່ອາທິດ ເພື່ອລົດນ້ຳນັກ ແລະທ່ານຈະຢູ່ສະບາຍ. ໃຫ້ເລືອກກິນອາຫານທີ່ມີຄຸນນະພາບຕໍ່ຮ່າງກາຍ ໃຫ້ກິນ ຫມາກໄມ້ ແລະຜັກໃຫ້ຫລາຍ, ປາ, ຊີ້ນທີ່ບໍ່ມີ ນ້ຳມັນ, ອາຫານປະເພດເປັນ ເມັດ, ແລະມີເຊື້ອໄຂມັນຕ່ຳ ຫຼືນ້ຳນົມສົດ ແລະຊີດ. ໃຫ້ເລືອກກິນອາຫານ ທີ່ມີຄຸນນະພາບຕໍ່ ຮ່າງກາຍໃຫ້ແກ່ຄອບຄົວ. ໃຫ້ຊອກຫາອາຫານຫວ້າງ ທີ່ມີຄຸນນະພາບ ເຊັ່ນ ຫມາກໄມ້ໄວ້ປະຈຳເຮືອນ. ໃຫ້ລົດກິນອາຫານທີ່ມີໄຂມັນລົງ ແລະອາຫານປະເພດຂື້ອຈືນ. ໃຫ້ລົດການກິນນ້ອຍລົງ. ໃຫ້ເລືອກດື່ມນ້ຳ. ໃຫ້ຈົດບັນທຶກຄວາມກ້າວຫນ້າ. ໃຫ້ບັນທຶກອາຫານທີ່ທ່ານກິນທັງຫມົດ ແລະນ້ຳທີ່ ທ່ານດື່ມ ແລະເວລາທີ່ທ່ານອອກແຮງ. ໃຫ້ຮຽນລຽງທຸກໆວັນ. ການເກັບບັນທຶກ ປະຈຳວັນ ເປັນວິທີນຶ່ງທີ່ເຮັດໃຫ້ມີຄວາມ ຕັ້ງໃຈ ແລະບັນລຸເຖິງເປົ້າຫມາຍ. ໃຫ້ປະຕິບັດໄປເລື້ອຍໆ. ແຕ່ລະທິດໃຫ້ເພີ້ມການຫັດແຮງແບບໃຫ່ມອັນນຶ່ງ. ຖ້າທ່ານ ຫຼືສະມາຊິກຄອບ ຄົວຫາກມີການທໍ້ຖອຍ, ໃຫ້ເລີ້ມໃຫ່ມ ແລະໃຫ້ປະຕິບັດໄປເລື້ອຍໆ. ເພື່ອລາຍຣະອຽດເພີ້ມຕື່ມ ກະຣຸນາຕິດຕໍ່ໄດ້ທີ່:

Tel. 1-800-438-5383 or email: www.ndep.nih.gov

ທ່ານມີອາການສ່ຽງກ່ຽວກັບໂຣຄເບົາຫວານປະເພດ 2 ນີ້ບໍ່?

ເພື່ອຊອກຫາກ່ຽວກັບອາການສ່ຽງຕໍ່ການໂຣຄເບົາຫວານຂອງທ່ານ ຈົ່ງຫມາຍແຕ່ລະຂໍ້ທີ່ເຫັນວ່າເຫມາະສົມກັບທ່ານ.

ຂ້ອຍມີອາຍຸເກີນກວ່າ 45 ປີ ນ້ຳນັກຂອງຂ້ອຍມີຄວາມສ່ຽງຕໍ່ການ ເປັນໂຣຄເບົາຫວານ ຂ້ອຍມີພໍ່ແມ່, ອ້າຍເອື້ອຍນ້ອງເປັນໂຣຄເບົາ ຫວານຂ້ອຍເປັນຊາວເອຊຽນ-ອາເມຣິກັນ ຫຼືເອເຊັຍປະຊີຟິກຂ້ອຍ ບໍ່ໄດ້ອອກແຮງຫຼາຍປານໃດ, ຂ້ອຍຫັດແຮງນ້ອຍກວ່າສາມເທື່ອຕໍ່ອາທິດ ຂ້ອຍຖືກບອກວ່າເປັນຕຸ່ມທີ່ມົດລູກ, ເພື່ອລາຍຣະອຽດໃຫ້ຖາມ ທ່ານຫມໍ ຂອງທ່ານກ່ຽວກັບໂຣຄ (Polycystic Ovary Syndrome, PCOS) ເວລາຂ້ອຍມານລູກ ຂ້ອຍມີໂຣຄເບົາຫວານ (this called gestational diabetes ) ຫຼືຂອ້ຍໄດ້ເກີດລູກທີ່ ມີນໍ້ນັກເກີນກວ່າ 9 ປອນ. ຂ້ອຍໄດ້ ຖືກບອກວ່າເຊື້ອນ້ຳຕານຢູ່ໃນເລືອດຂອງຂ້ອຍມີຣະດັບສູງ ຜິດປົກກະຕິ ຄວາມກົດດັນຂອງເລືອດຂ້ອຍມີສູງກວ່າ 140/90, ຂ້ອຍໄດ້ຖືກບອກ ວ່າຂ້ອຍມີຄວາມກົດດັນໂລຫິດສູງຣະດັບ (lipid) ໄຂມັນໃນເລືອດຂອງ ຂ້ອຍບໍ່ ປົກກະຕິ. ໄຂມັນໃນເລືອດສະນິດດີຂອງ ຂ້ອຍ HDL (“good” cholesterol) ມີລຸດ 35 ຫຼືຂ້ອຍມີຣະດັບໄຂມັນໃນເລືອດສູງກວ່າ 250 ຫນັງທີ່ອ້ອມຄໍຂ້ອຍ ແລະກ້ອງຂີ້ແຮ້ປາກົດມີຮອຍດຳ, ຫນາ ແລະເປັນ ສີເຫຼືອງອອ່ນ ທີ່ຮ້ອງວ່າ acanthosis nigricans ຂ້ອຍໄດ້ຖືກບອກວ່າ ຂ້ອຍມີບັນຫາກ່ຽວກັບການເດີນຂອງເລືອດ ຊຶ່ງເປັນຜົນສະທ້ອນກ່ຽວກັບ ຫົວໃຈ, ສະມອງ ຫຼືຂາຂອງຂ້ອຍ. ໃຫ້ຈຳໄວ້ວ່າ: ເມື່ອເວລາເຮົາແກ່ຂຶ້ນ ອາການສ່ຽງຕໍ່ການເປັນໂຣຄເບົາຫວານປະເພດ 2 ນີ້ ມີສູງຂຶ້ນ.

## ຄຳແນະນຳສຳລັບກົດຫມາຍວ່າດ້ວຍການຂໍຕໍ່ເງິນຊ່ວຍເຫຼືອສະ ຫວັດດີການສັງຄົມ (SSI) ເພີ້ມໃຫມ່ ແລະຊົ່ວຄາວ ສຳລັບ ຊາວຕ່າງດ້າວ ທີ່ເຂົ້າເມືອງຍ້ອນ ເຫດຜົນດ້ານມະນຸສທັມ

ມີຜົນບັງຄັບໃຊ້ນັບແຕ່ ວັນທີ 1 ເດືອນ ຕຸລາ 2008 ເປັນຕົ້ນໄປ. ເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ແມ່ນເງິນຊ່ວຍເຫຼືອ ໃຫ້ແກ່ຜູ້ເຖົ້າຜູ້ແກ່ ແລະຜູ້ເສັຽອົງຄະທີ່ມີລາຍໄດ້ຕ່ຳ. ຕັ້ງແຕ່ປີ 1996 ເປັນຕົ້ນມາເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ມີໄວ້ສະ ໝອງໃຫ້ແກ່ຊາວອົບພະຍົບ ແລະ ຊາວ ຕ່າງດ້າວທີ່ເຂົ້າເມືອງ ຍ້ອນ ເຫດຜົນດ້ານມະນຸສທັມກຸ່ມອື່ນໆໃດນຶ່ງເປັນໄລຍະພຽງແຕ່ເຈັດປີເທົ່ານັ້ນ. ກົດຫມາຍໃໝ່ "ວ່າດ້ວຍ ການຂໍຕໍ່ເງິນຊ່ວຍເຫຼືອສະຫວັດດີການສັງ ຄົມເພີ້ມ (SSI) ໃຫ້ແກ່ຜູ້ເຖົ້າຜູ້ແກ່ ແລະ ອົບພະຍົບທີ່ເສັຽອົງຄະ" (ກົດຫມາຍ ເລກທີ່ 110-328 (Public Law 110-328), ໄດ້ຕໍ່ເວລາ ໃຫ້ເງິນຊ່ວຍເຫຼືອແກ່ຊາວຕ່າງດ້າວຜູ້ທີ່ມີເງື່ອນໄຂຄົບຖ້ວນອອກໄປຕື່ມອີກ ເພື່ອໃຫ້ເຂົາເຈົ້າໄດ້ຮັບເງິນຊ່ວຍເຫຼືອຕໍ່ໄປອີກຢ່າງຫນ້ອຍເປັນເວລາສອງປີ. ຫນັງສືສະບັບນີ້ ຈະໃຫ້ຄຳຕອບບາງອັນ ທີ່ເປັນຄຳຖາມມັກມີກ່ຽວກັບກົດ ຫມາຍໃຫມ່ນີ້.

### 1. ຂ້ອຍເຊົາໄດ້ຮັບເງິນສະຫວັດດີການສັງຄົມເພີ້ມ (SSI) ຍ້ອນວ່າຂ້ອຍໄດ້ຮັບເງິນຊ່ວຍເຫຼືອນີ້ຄົບກຳໜົດເຈັດປີ ແລ້ວ. ກົດຫມາຍນີ້ຈະມີຜົນປະໂຫຍດຕໍ່ຂ້ອຍບໍ່? (ຖ້າທ່ານຫາກ ບໍ່ເຄີຍໄດ້ຂໍການຊ່ວຍເຫຼືອສະຫວັດ ດີການສັງຄົມເພີ້ມ (SSI) ນີ້ມາກ່ອນ, ໃຫ້ເບິ່ງຂໍ້ 7)

ທ່ານອາດຈະໄດ້ຮັບເງິນຊ່ວຍເຫຼືອນີ້ຖ້າສະພາບຂອງທ່ານຫາກຖືກຕາມເງື່ອນ ໄຂຂໍ້ໃດຂໍ້ນຶ່ງທີ່ບົ່ງໄວ້ດັ່ງຕໍ່ລົງໄປນີ້:

### ກ). ທ່ານມີອາຍຸຕ່ຳກວ່າ 18 ປີ ຫຼື ມີອາຍຸສູງກວ່າ 70 ປີ.

ຕົວຢ່າງເຊັ່ນ: ບຸກຄົນຜູ້ນຶ່ງທີ່ເຂົ້າມາອາເມຣິກາໃນເດືອນກັນຍາ1996 ເງິນ ຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ຂອງລາວໄດ້ຖືກຕັດໃນ ເດືອນຕຸລາ 2003 ຫຼັງຈາກຄົບກຳໜົດເຈັດປີແລ້ວ. ຖ້າປັດຈຸບັນນີ້ລາວ ຫາກມີອາຍຸເກີນກວ່າ 70 ປີ ລາວສາມາດມີເງື່ອນໄຂໄດ້ຮັບເງິນຊ່ວຍ ເຫຼືອສະຫວັດດີການສັງຄົມເພີ້ມ (SSI) ນີ້ຕໍ່ໄປອີກຕື່ມສອງປີ, ນັບ ແຕ່ເດືອນຕຸລາ 2008 ເປັນຕົ້ນໄປ. ລາວສາມາດໄດ້ຮັບເງິນຊ່ວຍເຫຼືອ ສະຫວັດດີການສັງຄົມເພີ້ມອີກໃນປີທີສາມ ຖ້າຫາກ ລາວໄດ້ຍື່ນຄຳຮ້ອງ ຂໍເປັນສັນຊາດແຕ່ຍັງບໍ່ທັນໄດ້ເປັນເທື່ອພາຍໃນເວລາທີ່ບໍ່ກາຍເດືອນຕຸລາ ປີ 2010.

### ຂ). ທ່ານມີຫນັງສືໃຫ້ຢູ່ອາເມຣິກາໄດ້ແບບຖາວອນ (ມີບັດຂຽວ) ທີ່ຍັງບໍ່ທັນເຖິງຫົກປີເທື່ອ.

ຕົວຢ່າງເຊັ່ນ: ບຸກຄົນຜູ້ທີ່ໄດ້ຮັບອານຸຍາດໃຫ້ລີ້ໄພຢູ່ໃນອາເຣິກາໃນ ເດືອນຕຸລາ 1998, ເລີ້ມໄດ້ຮັບເງິນຊ່ວຍເຫຼືອສະ ຫວັດດີການສັງຄົມເສັ່ງອິງຄະໃນເດືອນ ພຶສຈິກາ 1998 ແຕ່ໄດ້ຖືກຕັດໃນເດືອນພຶສຈິກກາ 2005 ເຊິ່ງເປັນ ເວລາເຈັດປີນັບແຕ່ມື້ໄດ້ຮັບອານຸຍາດໃຫ້ລີ້ໄພ. ລາວໄດ້ເຮັດຄຳຮ້ອງຂໍບັດ ຂຽວໃນເດືອນພຶສຈິກາ ປີ 1999 ແລະ ພາຍຫຼັງທີ່ ໄດ້ລໍຖ້າເປັນເວລາ ຍາວນານ, ໃນທີ່ສຸດລາວກໍໄດ້ຮັບບັດຂຽວໃນເດືອນ ມົກກະຣາ ປີ 2004. ລາວສາມາດມີເງື່ອນໄຂ ໄດ້ຮັບເງິນຊ່ວຍເຫຼືອເພີ້ມຕື່ມອີກເຖິງ ສອງປີ ນັບຕັ້ງແຕ່ເດືອນຕຸລາ 2008 ເປັນຕົ້ນໄປ ແລະ ລາວຍັງສາ ມາດທີ່ ຈະໄດ້ຮັບເງິນຊ່ວຍເຫຼືອ ນີ້ໃນປີທີ່ສາມຕໍ່ໄປອີກ ຂໍພຽງແຕ່ວ່າ ລາວເຮັດຄຳຮ້ອງຂໍເປັນສັນຊາດພາຍໃນເວລາທີ່ບໍ່ກາຍ ເດືອນຕຸລາ 2010.

### ຄ). ທ່ານໄດ້ຍື່ນຄຳຮ້ອງເພື່ອຂໍຢູ່ຖາວອນ (ຂໍບັດຂຽວ) ພາຍໃນສີ່ປີພາຍຫຼັງທີ່ທ່ານເລີ້ມໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງສັງຄົມເພີ້ມ (SSI) ແລ້ວ.

ຕົວຢ່າງເຊັ່ນ: ອົບພະຍົບຜູ້ນຶ່ງເຂົ້າມາອາເມຣິກາ ໃນເດືອນກຸມພາ 1999 ເລີ້ມໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການ ສັງຄົມ (SSI) ເມື່ອເວລາລາວມີອາຍຸ 55 ປີ ໃນປີ 2000. ໃນປີ 2003 ລາວໄດ້ເຮັດຄຳຮ້ອງຂໍບັດຂຽວ ແລະກໍໄດ້ຮັບບັດນັ້ນ. ສະຖານະພາບ ເປັນຄົນທີ່ຢູ່ອາເມຣິກາໄດ້ຖາວອນຂອງລາວຈະເລີ້ມມີຜົນນັບແຕ່ເດືອນກຸມພາ 1999 ເປັນຕົ້ນມາ ຊຶ່ງແມ່ນເວລາທີ່ລາວເຂົ້າ ມາອາເມ ຣິກາ. ໃນເດືອນມີນາ 2006, ເງິນ ຊ່ວຍເຫຼືອສະຫວັດ ດີກາສັງຄົມ ເພີ້ມຂອງລາວໄດ້ຖືກຕັດ ໂດຍອີງຕາມຂໍ້ກຳໜົດຈັດ ປີຂອງກົດ ຫມາຍ. ປັດຈຸບັນນີ້ ລາວມີອາຍຸໄດ້ 63 ປີ ແລະລາວສາມາດ ໄດ້ຮັບເງິນຊ່ວຍ ເຫຼືອສະຫວັດດີການສັງຄົມເພີ້ມ ຕື່ມອີກໄດ້ ເຖິງສອງປີ ເລີ້ມ ແຕ່ເດືອນຕຸລາ 2008 ເປັນຕົ້ນໄປ. ລາວສາ ມາດທີ່ຈະໄດ້ຮັບເງິນ ຊ່ວຍເຫຼືອປີ ທີ່ສາມຕໍ່ໄປອີກ ຖ້າລາວ ຫາກໄດ້ ເຮັດຄຳຮ້ອງຂໍເປັນສັນຊາດ ພາຍໃນເວລາທີ່ບໍ່ກາຍ ເດືອນ ຕຸລາ ປີ 2010.

### ງ). ຖ້າທ່ານຫາກເຂົ້າມາໃນອາເມຣິກາໃນນາມເປັນຊາວຄິວບາ ຫຼື ຊາວໄຮຕິ

ຕົວຢ່າງເຊັ່ນ: ບຸກຄົນຜູ້ນຶ່ງໄດ້ຮັບສະຖານະພາບເຂົ້າເມືອງໃນນາມເປັນຊາວຄິວບາ ຫຼື ຊາວໄຮຕິໃນເດືອນພຶສພາ 1997 ລາວໄດ້ຮັບເງິນ SSI ໃນປີ 2000 ຍ້ອນວ່າລາວເສັ່ງອິງຄະ ແລະ ລາວໄດ້ຮັບເງິນນັ້ນຈົນເຖິງເດືອນມິຖຸນາ 2004 ຊຶ່ງເປັນ ເວລາທີ່ມັນ ໄດ້ຖືກຕັດ. ບັດນີ້ ລາວສາມາດໄດ້ຮັບເງິນຊ່ວຍເຫຼືອເພີ້ມຕໍ່ໄປອີກ ໄດ້ເຖິງສອງປີ ຊຶ່ງເລີ້ມແຕ່ເດືອນ ຕຸລາ ປີ 2008 ເປັນຕົ້ນໄປ ແລະ ລາວສາມາດທີ່ຈະໄດ້ຮັບເງິນຊ່ວຍເຫຼືອໃນປີທີ່ສາມຕໍ່ໄປອີກ ຖ້າລາວ ຫາກເຮັດຄຳຮ້ອງຂໍເປັນສັນຊາດພາຍໃນເວລາທີ່ບໍ່ກາຍເດືອນ ຕຸລາ 2010.

### ຈ).ທ່ານຢູ່ໃນສະພາບລໍຖ້າການເນລະເທດສົ່ງກັບຄືນປະເທດເດີມ ຫຼື ຍົກຍ້າຍອອກໄປຈາກອາເມຣິກາ

ຕົວຢ່າງເຊັ່ນ:
ບຸກຄົນຜູ້ທີ່ຢູ່ໃນການລໍຖ້າການເນລະເທດສົ່ງກັບຄືນປະເທດເດີມໃນເດືອນທັນວາ 1996 ລາວມີເງື່ອນໄຂ ໄດ້ຮັບເງິນ SSI ໃນເດືອນມົກກະຣາ 1997 ຍ້ອນວ່າລາວເສັ່ງອິງຄະ ແລະເງິນນັ້ນໄດ້ຖືກຕັດລົງໃນເດືອນ ມົກກະຣາ 2003 ແຕ່ລາວສາມາດທີ່ຈະໄດ້ຮັບເງິນຊ່ວຍເຫຼືອນັ້ນຕື່ມອີກ ສອງປີ ນັບແຕ່ເດືອນຕຸລາ 2008 ເປັນຕົ້ນໄປ. ລາວຈະບໍ່ມີເງື່ອນໄຂ ໄດ້ຮັບເງິນຊ່ວຍເຫຼືອຕໍ່ໄປໃນປີທີ່ສາມ ເນື່ອງຈາກລາວບໍ່ມີສິດຍື່ນຄຳຮ້ອງຂໍເປັນສັນຊາດໄດ້.

### ສ). ທ່ານກຳລັງລໍຖ້າຄຳຮ້ອງຂໍເປັນສັນຊາດຢູ່ ຫຼືລໍຖ້າພິທີການເຂົ້າສາບານຕົວ.

ຕົວຢ່າງເຊັ່ນ: ບຸກຄົນຜູ້ນຶ່ງທີ່ເຂົ້າມາອາເມຣິກາໃນນາມອົບພະຍົບ ໃນເດືອນທັນວາ 1998 ແລະເລີ້ມໄດ້ຮັບເງິນ SSI ໃນເດືອນມົກກະຣາ 2000 ເມື່ອເວລາອາຍຸລາວໄດ້ 65 ປີ. ເງິນ SSI ຂອງລາວໄດ້ຖືກຕັດລົງໃນເດືອນມົກກະຣາ 2006 ເນື່ອງຈາກຄົບກຳໜົດຈັດປີຕາມກົດໝາຍ. ລາວໄດ້ເຮັດຄຳຮ້ອງຂໍເປັນສັນຊາດໃນເດືອນທັນວາ 2005 ແລະໄດ້ໄປສຳພາດໃນເດືອນທັນວາ 2006 ເຖິງແມ່ນວ່າລາວຈະ ໄດ້ຮັບອານຸຍາດໃຫ້ເປັນສັນຊາດອາເມຣິກາແລ້ວກໍ່ຕາມ ແຕ່ລາວ ຍັງບໍ່ທັນໄດ້ຮັບໃບຢັ້ງຢືນສັນຊາດເທື່ອ ເນື່ງຈາກການລໍຖ້າສືບສວນປະຫວັດຂອງລາວ. ລາວມີເງື່ອນໄຂ ໄດ້ຮັບເງິນ SSI ຕື່ມອີກສອງປີ ຊຶ່ງຈະເລີ້ມແຕ່ເດືອນຕຸລາ 2008 ເປັນຕົ້ນໄປ ແລະລາວສາມາດໄດ້ຮັບເງິນນັ້ນ ຕໍ່ໄປອີກໃນປີທີ່ສາມ ຖ້າລາວຫາກຍັງບໍ່ທັນໄດ້ຮັບໃບສັນຊາດເທື່ອໃນເວລານັ້ນ.
(ຫມາຍເຫດ: ບຸກຄົກດັ່ງກ່າວນີ້ ຍັງມີເງື່ອນໄຂ ໄດ້ຮັບເງິນ SSI ອີກຄືກັນກັບໃນກໍຣະນີຢູ່ຂໍ້ (ກ).

### 2. ທຸກຄົນທີ່ຖືກຕັດເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ເນື່ອງຈາກໄດ້ຮັບເງິນນີ້ຄົບກຳໜົດຈັດປີແລ້ວແມ່ນມີເງື່ອນໄຂໄດ້ຮັບເງິນຊ່ວຍເຫຼືອເພີ້ມພາຍໃຕ້ກົດຫມາຍການຂໍຕໍ່ຄວາມຊ່ວຍເຫຼືອສະບັບນີ້ບໍ່?

ບໍ່. ຊາວຕ່າງດ້າວທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມທີ່ບໍ່ມີເງື່ອນໄຂຖືກຕ້ອງຕາມກໍຣະນີທີ່ບົ່ງໄວ້ຂ້າງເທິງນີ້ ຈະບໍ່ມີສິດໄດ້ ຮັບເງິນຊ່ວຍເຫຼືອຕື່ມອີກສອງປີ. ຕົວຢ່າງເຊັ່ນ: ອົບພະຍົບຜູ້ນຶ່ງທີ່ເຂົ້າມາອາເມຣິກາ ໃນເດືອນຕຸລາ 1997 ທີ່ມີອາຍຸ 33 ປີ ແລະ ໄດ້ຮັບໃບອານຸຍາດໃຫ້ຢູ່ຖາວອນໃນປີ 1999 (ນຶ່ງປີພາຍຫຼັງທີ່ລາວມາເຖິງ) ອາເມຣິກາ ແລະ ຫຼັງຈາກນັ້ນ ລາວກໍໄດ້ ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ

**(SSI)** ເມື່ອເວລາລາວມີອາຍຸ 35 ປີ ເນື່ອງຈາກວ່າລາວເສັຽອົງຄະ. ເງິນ SSI ຂອງລາວໄດ້ຖືກຕັດໃນເດືອນພຶສຈິກາ 2005 ແລະ ປັດຈຸບັນນີ້ ລາວມີອາຍຸ 43 ປີ. ລາວຍັງບໍ່ທັນໄດ້ເຮັດຄຳຮ້ອງຂໍເປັນສັນຊາດເທື່ອ. ຕາບໃດທີ່ລາວຍັງບໍ່ໄດ້ເຮັດຄຳຮ້ອງຂໍສັນຊາດ ລາວຈະບໍ່ມີເງື່ອນໄຂ ທີ່ຈະຂໍຮັບເງິນ (SSI) ຕໍ່ໄປອີກໄດ້ເພາະວ່າລາວ ໄດ້ເປັນຜູ້ທີ່ຢູ່ອາເມຣິກາຢ່າງຖາວອນເປັນເວລາເກີນກວ່າຫົກປີແລ້ວ.

### 3. ຖ້າຂ້ອຍຫາກຖືກຕັດເງິນ SSI ຂ້ອຍຈະໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມໄດ້ຕື່ມອີກຈັກປີ?

ຖ້າທ່ານຫາກມີເງື່ອນໄຂ ທ່ານອາດຈະໄດ້ຮັບເງິນຊ່ວຍເຫຼືອອີກຕື່ມສອງປີ ເລີ້ມແຕ່ເດືອນຕຸລາ 2008 ເປັນຕົ້ນໄປ. ຖ້າວ່າ, ຫຼັງ ຈາກນັ້ນ ເຖິງແມ່ນວ່າທ່ານຍັງບໍ່ເປັນສັນຊາດເທື່ອກໍ່ຕາມ, ແຕ່ວ່າໃບຄຳຮ້ອງຂອງທ່ານ ກຳລັງລໍຖ້າການພິຈາລະນາຢູ່ ທ່ານອາດຈະໄດ້ຮັບເງິນ SSI ຕໍ່ໄປອີກໃນປີທີ່ສາມຈົນເຖິງເດືອນກັນຍາ ວັນທີ 30, 2011.

### 4. ຂ້ອຍຕ້ອງເຮັດແນວໃດ ເພື່ອຈະສາມາດເລີ້ມໄດ້ຮັບເງິນ SSI ອີກຕໍ່ໄປໄດ້?

ທາງຫ້ອງການສະຫວັດດີການສັງຄົມໄດ້ອອກປະກາດໃຫ້ຕໍ່ເງິນ SSI ແກ່ຊາວຕ່າງດ້າວທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມ ທີ່ມີເງື່ອນໄຂໄດ້ຮັບການຊ່ວຍເຫລືອ ແຕ່ຖືກຕັດເງິນ SSI ໄປເນື່ອງຈາກວ່າໄດ້ຄົບກຳໜົດຈັດປີແລ້ວ. ແຕ່ເຖິງຢ່າງໃດກໍ່ ຕາມ, ປັດຈຸບັນນີ້ ທາງພວກເຮົາຍັງບໍ່ທັນຮູ້ຈັກເທື່ອວ່າເມື່ອໃດທາງຫ້ອງການສະຫວັດດີການສັງຄົມຈະອອກປະກາດດັ່ງກ່າວນີ້. ສະນັ້ນ, ພວກເຮົາຂໍແນະນຳໃຫ້ທ່ານຈົ່ງໄປຕິດ ຕໍ່ກັບທາງຫ້ອງການສະຫວັດດີການສັງຄົມທ້ອງຖິ່ນໃນເຂດຂອງ ທ່ານອາ ໄສຢູ່ດ້ວຍຕົວທ່ານເອງ ເພື່ອຂໍໃຫ້ເຂົາເຈົ້າເລີ້ມໃຫ້ເງິນ SSI ແກ່ທ່ານຄືນອີກ._ທ່ານອາຈຕິດຕໍ່ທາງຫ້ອງການສະຫວັດດີ ການສັງຄົມໄດ້ທີ່ເບີໂທ 1-800-772-1213. ຖ້າທ່ານຫູບໍ່ຄ່ອຍດີ ໃຫ້ຕິດຕໍ່ທາງ TTY ນຳເບີ 1-800-325-0778.ຖ້າເງິນຊ່ວຍເຫຼືອສະຫວັດດີການສັງຄົມຂອງທ່ານຫາກຖືກຕັດໃນ ເດືອນຕຸລາ ຫຼື ເດືອນພຶສຈິກກາ 2008 ແລະ ທ່ານໄດ້ໄປຫາ ທາງຫ້ອງການສະຫວັດດີການສັງຄົມ ເພື່ອຂໍໃຫ້ເຂົາເຈົ້າໃຫ້ເງິນຊ່ວຍ ເຫລືອຕໍ່, ທາງຫ້ອງການສະຫວັດ ດີການສັງຄົມຄວນຕໍ່ໃຫ້ທ່ານທັນທີ. ເລີ້ມແຕ່ເດືອນທັນວາ 2008 ເປັນຕົ້ນໄປ, ຊາວຕ່າງດ້າວຜູ້ທີ່ມີເງື່ອນ ໄຂຖືກຕ້ອງ ຕາມຂໍ້ກຳໜົດໃນການຂໍຕໍ່ເງິນຊ່ວຍເຫຼືອ ບໍ່ຄວນຈະເສັຽເງິນ ຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ **<u>(SSI)</u>** ຍ້ອນຂໍ້ຈຳ ກັດຂອງກົດ ຫມາຍທີ່ໃຫ້ກຳໜົດຈັດປີ. ເຂົາເຈົ້າຈະ ຕ້ອງໄດ້ຮັບເງິນຊ່ວຍເຫຼືອຕໍ່ໄປ ອີກເປັນເວລາຢ່າງຫນ້ອຍສອງປີ. ຖ້າເງິນ ຊ່ວຍເຫຼືອສະຫວັດດີການສັງ ຄົມຂອງທ່ານ ຫາກຖືກຕັດກ່ອນຫນ້າເດືອນຕຸລາ ວັນທີ 1, 2008 ທາງຫ້ອງການສະ ຫວັດດີການສັງຄົມຕ້ອງການຈະເບິ່ງຫລັກຖານກ່ຽວ ກັບລາຍໄດ້ຂອງທ່ານໃນແຕ່ລະເດືອນ ທີ່ທ່ານໄດ້ຮັບຫຼັງຈາກເດືອນຕຸລາ ວັນທີ 1, 2008 ເປັນຕົ້ນມາແລະ ອາດຕ້ອງການຫລັກຖານກ່ຽວກັບ ສະຖານະພາບການເປັນຜູ້ຢູ່ອາໃສ ທີ່ຢູ່ຖາວອນ **(LPR)** ຫຼືໜັງສືການ ຂໍເປັນສັນຊາດ. ຖ້າທ່ານຫາກ ບໍ່ມີຫລັກຖານຢັ້ງຢືນວ່າ ສະຖານະພາບ ການເຂົ້າເມືອງຖືກຕ້ອງຕາມ ກົດຫມາຍທາງຫ້ອງການສະຫວັດດີການ ສັງຄົມຈະໃຫ້ທ່ານເຊັນຫນັງສື ອານຸຍາດໃຫ້ເຂົາເຈົ້າກວດເບິ່ງໜັງ ສືທີ່ ກ່ຽວຂ້ອງ ກັບສະຖານະພາບ ການເຂົ້າເມືອງຂອງທ່ານ. ທາງຫ້ອງການ ຈະກວດເບິ່ງລາຍໄດ້ປະຈຳ ເດືອນຂອງທ່ານເລີ້ມແຕ່ເດືອນຕຸລາ ວັນທີ 1, 2008 ຖ້າທ່ານ ສາມາດພິສູດກັບຄືນຫລັງໄດ້ໃນເວລານັ້ນ ວ່າທ່ານມີ ເງື່ອນໄຂເໝາະ ສົມໃນການໄດ້ຮັບເງິນຊ່ວຍເຫລືອນີ້, ທາງຫ້ອງການ ຈະ ຈ່າຍເງິນນັ້ນ ໃຫ້ທ່ານກັບຄືນເຖິງເດືອນຕຸລາ ວັນທີ 1, 2008 ເຖິງແມ່ນ ວ່າທ່ານ ຈະເລີ້ມໄປຂໍການຊ່ວຍເຫຼືອໃນເວລາ ໃດກໍ່ຕາມ. ຖ້າບໍ່ດັ່ງນັ້ນ, ທ່ານຈະ ໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ <u>(SSI)</u> ພຽງແຕ່ ເດືອນ ທີ່ທ່ານສາມາດແຈ້ງຫລັກຖານພິສູດວ່າທ່ານມີເງື່ອນໄຂເໝາະ ສົມເທົ່ານັ້ນ. ໃຫ້ເບິ່ງຂໍ້ 7 ເພື່ອຢາກຮູ້ລະອຽດເພີ້ມເຕີມ ກ່ຽວກັບຄຳຮ້ອງໃໝ່

### 5. ຂ້ອຍເຄີຍໄດ້ຮັບເງິນຊ່ວຍເຫລືອສະຫວັດດີການສັງຄົມເພີ້ມ (SSI) ເນື່ອງຈາກຂ້ອຍເສັຽຄົງຄະ ແຕ່ກໍ່ໄດ້ຖືກຕັດໄປເນື່ອງຈາກຄົບກຳໜົດຈັດປີ. ຂ້ອຍຈະຕ້ອງໄດ້ແຈ້ງ ການເສັຽອົງຄະຂອງຂ້ອຍ ກ່ອນທີ່ຂ້ອຍຈະໄດ້ຮັບ ເງິນ SSI ອີກໃໝ່ບໍ່?

ບໍ່. ທາງຫ້ອງການສະຫວັດດີການສັງຄົມຮຽກຮ້ອງໃຫ້ຜູ້ທີ່ເສັຽອົງຄະຜູ້ທີ່ບໍ່ໄດ້ຮັບເງິນ SSI ຫລາຍກວ່າ ນຶ່ງປີ ແຈ້ງໜັງສືກ່ຽວ ກັບການເສັຽອົງຄະຂອງ ເຂົາເຈົ້າ ກ່ອນທີ່ເຂົາເຈົ້າຈະໄດ້ຮັບເງິນຊ່ວຍເຫລືອນັ້ນອີກ. ແຕ່ເຖິງຢ່າງໃດກໍ່ຕາມ, ໃນເວລາປັດຈຸບັນນີ້ ທາງຫ້ອງການສະຫວັດດີການສັງຄົມບໍ່ຕ້ອງການໃຫ້ຜູ້ທີ່ເສັຽອົງຄະແຈ້ງໜັງສືກ່ຽວກັບການເສັຽອົງຄະຂອງເຂົາເຈົ້າ ກ່ອນເພື່ອ ໃຫ້ໄດ້ຮັບເງິນ <u>SSI</u>. ຫມາຍເຫດ: ສຳລັບຜູ້ທີ່ເຮັດຄຳຮ້ອງຂໍເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມໃໝ່ທີ່ອີງໃສ່ ການເສັຽອົງຄະເປັນພື້ນຖານນັ້ນ ຈະຕ້ອງແຈ້ງຫລັກຖານກ່ຽວກັບການເສັຽອົງຄະຂອງເຂົາເຈົ້າ.

### 6. ຂ້ອຍຍັງໄດ້ຮັບເງິນຊ່ວຍເຫລືອສະຫວັດດີການສັງຄົມເພີ້ມຢູ່, ແຕ່ວ່າ ຂໍ້ກຳໜົດຈັດປີ ຂອງກົດຫມາຍ ນີ້ແມ່ນຖືກກັບກໍລະນີຂອງຂ້ອຍ. ຂ້ອຍຄວນຈະເຮັດສິ່ງໃດສິ່ງນຶ່ງອີກບໍ່ ເພື່ອໃຫ້ແນ່ໃຈວ່າຂ້ອຍຈະໄດ້ຮັບເງິນຊ່ວຍ ເຫຼືອນີ້ຕື່ມອີກສອງປີ?

ບໍ່. ຖ້າກົດຫມາຍຂໍ້ກຳໜົດຈັດປີຂອງກົດໝາຍຖືກກັບກໍລະນີຂອງທ່ານແລະທ່ານຍັງໄດ້ຮັບເງິນ SSI ຢູ່, ປັດຈະບັນນີ້ທ່ານບໍ່ ຈຳເປັນຕ້ອງເຮັດຫຍັງຕື່ມອີກ. ຫລັງຈາກນັ້ນ, ທາງຫ້ອງການສະຫວັດດີການສັງຄົມຈະໃຫ້ທ່ານ ເຊັນໜັງສືໃຫ້ຄຳໝັ້ນສັນຍາ ວ່າ"ທ່ານຈະໃຊ້ຄວາມພະຍາຍາມໃນທາງທີ່ດີ ແລະ ຊື່ສັດໃນການທີ່ຈະຂໍເປັນສັນຊາດອາເມຣິກາ". ແຕ່ວ່າກົງກັນຂ້າມ, ຖ້າທ່ານ ຫາກມີເງື່ອນໄຂ ໄດ້ຮັບເງິນຊ່ວຍເຫຼືອຕໍ່ໄປທ່ານບໍ່ຕ້ອງໄດ້ເຮັດຫຍັງຕື່ມອີກ. ທາງຫ້ອງການສະຫວັດດີການສັງຄົມຈະໃຫ້ເງິນ SSI ແກ່ທ່ານຕໍ່ໄປເລີຍ. ທ່ານຈະໄດ້ຮັບເງິນຊ່ວຍເຫຼືອສະ

ຫວັດ ດີການສັງຄົງຄົມເພີ້ມຕໍ່ໄປອີກເປັນກຳໜົດທັງຫມົດເກົ້າປີ. ຖ້າຫາກເກົ້າປີທີ່ທ່ານໄດ້ຮັບການຊ່ວຍເຫລືອຄົບກຳໜົດກ່ອນຫນ້າເດືອນ ຕຸລາ 2011, ທ່ານອາຈໄດ້ຮັບເງິນຊ່ວຍເຫຼືອຈົນ ເຖິງເດືອນຕຸລາ 2011, ເທົ່ານັ້ນ ຖ້າທ່ານຫາກຍື່ນຄຳຮ້ອງຂໍເປັນສັນຊາດຂອງທ່ານ ຫາກກຳລັງລໍຖ້າການພິຈາລະນາຢູ່. ບາງທ່ານຈະຖືກຕັດເງິນ **SSI** ໃນເດືອນຕຸລາ 2008 ແລະ ເດືອນພຶສຈິກາ 2008 ເງິນຊ່ວຍເຫຼືອຂອງເຂົາເຈົ້າອາດຈະຖືກ ຕັດຊົ່ວຄາວ. ບໍ່ນານເຂົາເຈົ້າກໍ່ຈະໄດ້ຮັບເງິນຊ່ວຍເຫຼືອນັ້ນຄືນອີກ. ໃຫ້ຕິດຕໍ່ຫາທາງຫ້ອງການສະຫວັດດີການສັງຄົມໂດຍດ່ວນ ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອສະຫວັດດີການສັງຄົມດ່ວນ. ໃຫ້ທ່ານຕິດຕໍ່ຫາທາງຫ້ອງເງິນຊ່ວຍເຫຼືອ Medicaid ໃນຣັດ ຂອງທ່ານຖ້າເງິນຊ່ວຍເຫຼືອຫາກຖືກຕັດຍ້ອນການຜິດພາດ. ທ່ານຕ້ອງຂໍອຸທອນ ຖ້າຫາກເງິນຊ່ວຍເຫຼືອ Medicaid ຂອງທ່ານຫາກຖືກຕັດລົງ.

### 7. ອາຍຸຂ້ອຍໄດ້ 65 ປີ ຫຼືຂ້ອຍໄດ້ເສັຽອົງຄະ. ເຂົາເຈົ້າບອກຂ້ອຍວ່າ ຂ້ອຍຈະບໍ່ໄດ້ຮັບການຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ ເພາະວ່າ ກຳໜົດເຈັດປີຂອງຂ້ອຍໄດ້ຫມົດເວລາແລ້ວ. ຂ້ອຍບໍ່ ເຄີຍໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມນີ້ມາກ່ອນ. ກົດຫມາຍໃຫມ່ນີ້ຈະຊ່ວຍຂ້ອຍໄດ້ບໍ່?

ຜູ້ລີ້ໄພ, ອົບພະຍົບ ແລະ ຊາວຕ່າງດ້າວທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມກຸ່ມອື່ນໆໃດນຶ່ງທີ່ຂໍເງິນຊ່ວຍເຫຼືອສະຫວັດ ດີການສັງຄົມເພີ້ມ (SSI) ຄັ້ງທຳອິດພາຍໃນ ຫຼື ຫລັງຈາກເດືອນຕຸລາ 2008 ອາດຈະມີເງື່ອນໄຂໄດ້ຮັບເງິນ SSI ຊົ່ວຄື້ນຢູ່ ກັບການໄດ້ຮັບສະຖານະພາບການເປັນອົບພະຍົບ, ຜູ້ລີ້ໄພ, ຊາວຕ່າງດ້າວ ທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມ ອື່ນໆຄັ້ງ ທຳອິດຂອງທ່ານ. ຖ້າທ່ານໄດ້ຮັບສະຖານະພາບທີ່ກ່າວມານັ້ນຫລັງຈາກເດືອນຕຸລາ 2002, ທ່ານອາດຈະໄດ້ຮັບເງິນຊ່ວຍເຫຼືອ ຈົນເຖິງ ເດືອນຕຸລາ 2011.

- ຖ້າທ່ານໄດ້ຮັບອານຸຍາດ ລະຫວ່າງເດືອນຕຸລາ 1999 ແລະ ເດືອນຕຸລາ 2002, ທ່ານອາດຈະໄດ້ຮັບເງິນຊ່ວຍເຫຼືອ ເລີ້ມແຕ່ເວລາທີ່ທ່ານໄດ້ເຮັດຄຳຮ້ອງຂໍເງິນຊ່ວຍເຫຼືອສະຫວັດ ດີການສັງຄົມເພີ້ມຈົນເຖິງເວລາຄົບຮອບເກົ້າປີຂອງການ ໄດ້ຮັບ ສະຖານະພາບການເປັນອົບພະຍົບ, ຜູ້ລີ້ໄພ ຫຼື ຊາວຕ່າງດ້າວ ທີ່ເຂົ້າເມືອງຍ້ອນເຫດຜົນດ້ານມະນຸສທັມອື່ນໆ. ພາຍຫລັງໄລຍະ ເວລານີ້ຫາກຈົບລົງ, ທ່ານຈະສາມາດໄດ້ຮັບເງິນຊ່ວຍເຫຼືອຕໍ່ໄປ ອີກຈົນເຖິງ ເດືອນຕຸລາ 2011 ພຽງແຕ່ຢູ່ໃນກໍລະນີທີ່ວ່າ ທ່ານຢູ່ໃນລະຫວ່າງການລໍຖ້າປ່ຽນສັນຊາດຢູ່ ຫຼື ທ່ານໄດ້ເປັນສັນຊາດແລ້ວເທົ່ານັ້ນ.

ຖ້າທ່ານໄດ້ຮັບສະຖານະພາບທີ່ກ່າວມານັ້ນກ່ອນຫນ້າເດືອນຕຸລາ 1999, ທ່ານບໍ່ມີເງື່ອນໄຂໄດ້ຮັບເງິນ SSI ທີ່ຂໍຕໍ່ ໃຫມ່ດັ່ງກ່າວນີ້.

ຄວນຈຳໄວ້: ກົດຫມາຍໃໝ່ສະບັບພິເສດນີ້ ແມ່ນໃຊ້ສະເພາະຕໍ່ຊາວຕ່າງດ້າວຜູ້ທີ່ເຮັດຄຳຮ້ອງຂໍການຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ຄັ້ງທຳອິດພາຍໃນ ຫຼື ຫລັງຈາກເດືອນຕຸລາ 2008 ເທົ່ານັ້ນ.

### 8. ຂ້ອຍຈະເຮັດແນວໃດ ຖ້າຂ້ອຍຫາກຍັງບໍ່ທັນເປັນສັນຊາດເທື່ອຫລັງຈາກເກົ້າປີແລ້ວ?

ຖ້າທ່ານຫາກຍັງບໍ່ທັນເປັນສັນຊາດເທື່ອ ຫລັງຈາກໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມຕື່ມອີກສອງປີແລ້ວ ທ່ານອາດຈະໄດ້ຮັບເງິນ ຊ່ວຍເຫຼືອຕື່ມອີກໃນປີທີ່ສາມຕໍ່ໄປ ຖ້າທ່ານໄດ້ຂໍເປັນສັນຊາດ ແລະ ຍັງລໍຖ້າການພິຈາລະນາຢູ່. ເຖິງຢ່າງໃດ ກໍ່ຕາມ, ເງິນຊ່ວຍເຫຼືອຈະຕ້ອງຖືກຕັດລົງຫລັງຈາກເດືອນກັນຍາ ວັນທີ 30 2011. ທ່ານຕ້ອງເປັນສັນຊາດອາເມຣິກັນແລ້ວ ໃນເວລານັ້ນ ເພື່ອໃຫ້ໄດ້ຮັບເງິນຊ່ວຍເຫຼືອສະຫວັດດີການສັງຄົມຕໍ່ໄປ, ເວັ້ນເສັຽແຕ່ວ່າຣັຖສະພາອາເມຣິກາຈະຜ່ານກົດຫມາຍໃໝ່.

### 9. ທີ່ຜ່ານມາ ເງິນຊ່ວຍເຫຼືອສະຫວັດດີການສັງຄົມເພີ້ມ (SSI) ຂອງຂ້ອຍໄດ້ຖືກຕັດ ເນື່ອງຈາກຂໍ້ ກຳໜົດເຈັດປີຂອງກົດຫມາຍ. ຂ້ອຍຈະໄດ້ຮັບເງິນຊ່ວຍເຫຼືອທີ່ຂ້ອຍໄດ້ເສັຽໄປນັ້ນຄືນບໍ່?

ບໍ່. ແຕ່ວ່າທ່ານອາດຈະໄດ້ຮັບເງິນ SSI ຕື່ມອີກສອງປີ ເລີ້ມແຕ່ເດືອນຕຸລາ 2008 ເປັນຕົ້ນໄປ. ຖ້າການຊ່ວຍເຫຼືອຂອງ ທ່ານຫາກຖືກຕັດເນື່ອງຈາກຖືກຈຳກັດໂດຍຂໍ້ກຳໜົດເຈັດປີຂອງກົດໝາຍ, ທ່ານອາຈໄດ້ຮັບເງິນຊ່ວຍ ເຫຼືອຍ້ອນຫລັງຄືນ ເຖິງ ເດືອນຕຸລາ 2008 ແລະ ໄດ້ຮັບຕໍ່ໄປຈົນເຖິງ ເດືອນຕຸລາ 2010. ເຖິງຢ່າງໃດກໍ່ຕາມ, ທາງຫ້ອງການສະຫວັດດີການ ສັງ ຄົມຈະບໍ່ໃຫ້ເງິນຊ່ວຍເຫຼືອຂອງເດືອນໃດໆ ກ່ອນຫນ້າເດືອນດັ່ງກ່າວນັ້ນ. (ຕໍ່ສະບັບຫນ້າ)

### 10. ຂ້ອຍໄດ້ໄປຫ້ອງການ ການຊ່ວຍເຫຼືອສະຫວັດດີການສັງຄົມປະຈຳທ້ອງຖິ່ນຂອງຂ້ອຍ ເພື່ອຈະຮັບເອົາການຊ່ວຍເຫລືອສະຫວັດດີການສັງຄົມເພີ້ມ (SSI) ຄືນອີກແຕ່ວ່າເຂົາເຈົ້າບອກຂ້ອຍວ່າຂ້ອຍບໍ່ມີເງື່ອນໄຂທີ່ຈະຂໍຄືນໄດ້ອີກ. ຖ້າອີງໃສ່ຂໍ້ມູນຕາມໜັງສືສະບັບນີ້ ຂ້ອຍເຊື່ອວ່າ ຂ້ອຍມີສິດຂໍຄືນໄດ້. ຂ້ອຍຄວນຈະເຮັດຈັ່ງໃດດີ?

ໃຫ້ຕິດຕໍ່ຫາຫ້ອງການທີ່ບໍລິການດ້ານກົດໝາຍໃນທ້ອງຖິ່ນຢ່າງໂດຍດ່ວນ. ພະນັກງານບາງຄົນໃນທີ່ນັ້ນອາດສາມາດຊ່ວຍທ່ານໄດ້.

### 11. ຂ້ອຍຍັງຕ້ອງການເສັງພາສາອັງກິດ ແລະສອບເອົາສັນຊາດຢູ່ບໍ່ ເພື່ອຈະໃຫ້ໄດ້ເປັນສັນຊາດອາເມຣິກາ?

ກົດໝາຍໃໝ່ ບໍ່ໄດ້ປ່ຽນເງື່ອນໄຂຈຳເປັນເພື່ອຈະເປັນສັນຊາດອາເມຣິກາ, ເວັ້ນເສັຽແຕ່ວ່າ ທ່ານມີອາຍຸຕໍ່າກວ່າ 18 ປີ ຫ້ອງ ການສະຫວັດດີການສັງຄົມຈະຮຽກຮ້ອງໃຫ້ທ່ານເຊັນໜັງສືໃຫ້ຄຳໝັ້ນສັນຍາວ່າ "ທ່ານຈະໃຊ້

ຄວາມພະຍາຍາມຢ່າງຊື່ສັດໃນການ ທີ່ຈະຂໍເປັນສັນຊາດອາເມຣິກາ" ຕາມຄວາມສາມາດຂອງຕົນທັງທາງດ້ານຮ່າງກາຍແລະມັນສະໝອງເປັນຢ່າງດີທີ່ສຸດ. ຖ້າວ່າ ທ່ານ ພິການດ້ານໃດດ້ານນຶ່ງທີ່ເຮັດໃຫ້ທ່ານບໍ່ສາມາດຮຽນພາສາອັງກິດໄດ້ໃຫ້ທ່ານຂໍຄຳປຶກສານຳຜູ້ຊ່ຽວຊານດ້ານການເຂົ້າເມືອງຂອງຊາວຕ່າງດ້າວ ຣັຖບານອາດສາມາດອະນຸຍາດໃຫ້ທ່ານ ບໍ່ຕ້ອງສອບເສັງພາສາອັງກິດ, ປະຫວັດສາດ ແລະ ການປົກຄອງຂອງ ຣັຖບານໄດ້.

### 12. ດຽວນີ້ເວລາໄດ້ກາຍຫົກເດືອນແລ້ວທີ່ຂ້ອຍໄດ້ຍື່ນຄຳຮ້ອງຂໍເປັນບຸກຄົນອາໃສຢູ່ໃນປະເທດນີ້ຢ່າງຖືກຕ້ອງ (ມີບັດຂຽວ) ຫລື ສັນຊາດອາເມຣິກາ. ຂ້ອຍສາມາດເຮັດຫຍັງໄດ້ບໍ່ເພື່ອຈະໃຫ້ຝ່າຍບໍລິການດ້ານການຂໍສັນຊາດອາເມຣິກັນ ແລະ ຄົນຕ່າງຊາດ (CIS) ດຳເນີນການພິຈາລະນາຄຳຮ້ອງຂອງຂ້ອຍໃຫ້ໄວຂຶ້ນກວ່າເກົ່າໄດ້?

*ມີ. ຍ້ອນວ່າໄດ້ຮັບຜົນມາຈາກຄະດີຟ້ອງຮ້ອງທີ່ບໍ່ດົນມານີ້ ຊື່ Kaplan v. Chertoff, ຊາວຕ່າງຊາດຜູ້ທີ່ຖືກຂໍ້ຈຳກັດໂດຍຂໍ້ກຳ ໜົດເຈັດປີ ຍັງສາມາດມີສິດໄດ້ຮັບລະບົບດຳເນີນການພິຈາລະນາຄຳຮ້ອງຂອງເຂົາເຈົ້າແບບ" ເລັ່ງ" (ດ່ວນ) ໄດ້. ຖ້າທ່ານໄດ້ຂໍ ຖ້າມາເປັນເວລາຫລາຍກ ວ່າຫົກເດືອນແລ້ວ ກະລຸນາໃຫ້ໂທຫາ CIS ທີ່ເບີໂທ 1-800-889-4369 ແລະ ຂໍໃຫ້ເຂົາເຈົ້າເລັ່ງ ດຳເນີນການພິຈາລະນາຄຳຮ້ອງຂອງທ່ານ. ການດຳເນີນການພິຈາລະນາຄຳຮ້ອງນີ້ຍັງສາມາດນຳມາໃຊ້ໄດ້ ເມ່ນແຕ່ ວ່າກົດໝາຍນີ້ໄດ້ຖືກຜ່ານອອກມາແລ້ວກໍຕາມ. ຖ້າທ່ານຍັງບໍ່ທັນໄດ້ຂໍ ບັດຂຽວ ຫລື ຂໍເປັນສັນຊາດເທື່ອ ໃນເວລາທີ່ທ່ານຍື່ນຄຳຮ້ອງໃຫ້ບອກ CIS ໃຫ້ຊາບວ່າທ່ານຂໍໃຫ້ໃບ ຄຳຮ້ອງຂອງທ່ານຖືກເລັ່ງພິຈາລະນາ ເພາະວ່າທ່ານຈັດຢູ່ໃນ "Kaplan class (ລະບົບດຽວກັນກັບກໍລະ ນີເຄບເພລນ)."*

### 13. ຂ້ອຍບໍ່ສາມາດຈະຂໍບັດຂຽວ ຫລື ຂໍເປັນສັນຊາດໄດ້. ມີການຊ່ວຍເຫລືອໃດບໍ່ທີ່ສາມາດຊ່ວຍຂ້ອຍໄດ້?

*ມີ. ຍ້ອນວ່າໄດ້ຮັບຜົນມາຈາກຄະດີຟ້ອງຮ້ອງທີ່ບໍ່ດົນມານີ້ ຊື່ Kaplan v. Chertoff, ຊາວຕ່າງຊາດຜູ້ທີ່ຖືກຂໍ້ຈຳກັດໂດຍຂໍ້ກຳ ໜົດເຈັດປີ ຍັງອາດຈະສາມາດໄດ້ຮັບການຍົກເວັ້ນໃນການເສັຽຄ່າທຳນຽມຍື່ນຄຳຮ້ອງຖ້າຫາກເຂົາເຈົ້າຂໍຍົກເວັ້ນ. ໃນເວລາທີ່ທ່ານ ຂໍບັດຂຽວ ຫລື ຂໍເປັນສັນຊາດ, ຢ່າລືມຖາມເອົາ "ໃບຍົກເວັ້ນການເສັຽຄ່າທຳນຽມ," ແລະ ບອກໃຫ້ທາງຫ້ອງການ CIS ຂອງສະຫະຣັດຊາບວ່າ ທ່ານຈັດຢູ່ໃນ "Kaplan class (ລະບົບດຽວກັນກັບກໍລະນີເຄບເພລນ)."*

*ຖ້າວ່າທ່ານມີຄຳຖາມອັນໃດເພີ້ມເຕີມ ກະລຸນາຕິດຕໍ່ຫ້ອງການບໍລິການດ້ານກົດໝາຍ, ຫ້ອງການໃຫ້ການຊ່ວຍເຫລືອດ້ານກົດໝາຍ ແລະອົງການຊ່ວຍເຫລືອອື່ນໆ ເພື່ອຊ່ວຍອະທິບາຍໃຫ້ທ່ານຟັງ*

*Translated by Howard Phensomphone and Edited by Buasawan Simmala, Laotian American National Alliance*

### ການສຳຣວດສະຖິຕິປະຊາກອນ ໒໐໑໐

*ຣັຖທັມມະນູນຂອງສະຫາຣັດໄດ້ກຳນົດໃຫ້ມີການສຳຣວຈສຳມະໂນປະຊາກອນທຸກໆ ໑໐ ປີ ການສຳຣວຈສຳມະໂນປະຊາກອນ ຄືການຄຳນວນປະຊາກອນຂອງສະຫາຣັດທຸກໆໄວ ເຊື້ອຊາດ ແລະ ຊົນເຜົ່າທີ່ອາໃສຢູ່ໃນສະຫະຣັດອາເມຣິກາ ສຖິຕິຈາກການສຳຣວຈສຳມະໂນປະຊາກອນ ຈະຊີ້ນຳຄນະຣັຖບາລປົກຄອງທ້ອງຖິ່ນ ໃນການວາງແຜນພັທນາປະຊາຄົມເຊັ່ນການສ້າງຖະ ໜົນ ໂຮງໝໍ ຫໍໂຮງຮຽນ ແລະ ມີຜົນກະທົບໃນການສແດງຄວາມຄິດເຫັນດ້ານການເມືອງໃນ ສະພາຜູ້ແທນໂດຍ ກຳໜົດໃຫ້ມີຜູ້ແທນຣາຊດອລຈາກແຕ່ລະຣັດຫຼາຍປານໃດ ແລະ ການແບ່ງປັນງົບປະມານ ຫລວງປະຈຳປີຈາກຣັຖບາລກາງ. ກະຣຸນາໃຫ້ຄວາມຮ່ວມມື.*